# ພວກເຮົາ ສາມາດເຕີບໃຫຍ່ ເຂັ້ມແຂງໄປພ້ອມກັນ



“ປຶ້ມກາຕູນ”



ສະຫະພາບ ເອີຣົບ
European Union

ສປປ ລາວ
Lao PDR

# ພວກເຮົາ
# ສາມາດເຕີບໃຫຍ່
# ເຂັ້ມແຂງໄປພ້ອມກັບ

"ປຶ້ມກາຕູນ"





# ປຶ້ມກາຕູນ “ພວກເຮົາສາມາດເຕີບໃຫຍ່ເຂັ້ມແຂງໄປພ້ອມກັນ”

ສະຫະພາບເອີຣົບ ແມ່ນກຸ່ມປະເທດຮ່ວມກັນ ທາງດ້ານເສດຖະກິດ ແລະ ການເມືອງຂອງ 27 ປະເທດເອີຣົບເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນ ບົນພື້ນຖານການເຫັນຄຸນຄ່າ ເຄົາລົບກຽດສັກສີຂອງມະນຸດ, ເສລີພາບ, ປະຊາທິປະໄຕ, ຄວາມສະເໝີພາບ, ລະບຽບກົດໝາຍ ແລະ ເຄົາລົບຕໍ່ສິດທິມະນຸດ. ພວກເຮົາປະຕິບັດງານໃນທົ່ວໂລກ ເພື່ອສົ່ງເສີມການພັດທະນາແບບຍືນຍົງ ຂອງສັງຄົມ, ສະພາບແວດລ້ອມ ແລະ ເສດຖະກິດ, ເພື່ອໃຫ້ທຸກຄົນໄດ້ຮັບຜົນປະໂຫຍດຮ່ວມກັນ.

ຢູ່ ສປປ ລາວ, ຫ້ອງການຜູ້ຕາງໜ້າສະຫະພາບເອີຣົບ ມີພາລະກິດ ຮັດແໜ້ນສາຍພົວພັນກັບລັດຖະບານລາວ ແລະປະຊາຊົນລາວ ໃຫ້ດີຂຶ້ນ ເພື່ອຜົນປະໂຫຍດເຊິ່ງກັນ ແລະ ກັນ, ແລະ ເພື່ອແນໃສ່ຊຸກຍູ້ສັນຕິພາບ, ຄວາມໝັ້ນຄົງ ແລະ ການພັດທະນາແບບຍືນຍົງ. ສະຫະພາບເອີຣົບ ເປັນໜຶ່ງໃນຜູ້ມີບົດບາດສຳຄັນ ໃນການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການໃນປະເທດລາວ.

ປຶ້ມເຫຼັ້ມນີ້ ໄດ້ຮວບຮວມເອົາເລື່ອງຕ່າງໆ ໃນບັນດາຂົງເຂດຕົ້ນຕໍ ໂດຍແຜນງານສຳຄັນຂອງພວກເຮົາຄື: ແຜນງານ “ການຮ່ວມມືເພື່ອການປັບປຸງໂພຊະນາການ ໃນ ສປປ ລາວ” ແລະ “ການສະໜັບສະໜູນງົບປະມານ ດ້ານໂພຊະນາການໃຫ້ແກ່ຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດ” ແຕ່ປີ 2016-2025.


ຜະລິດໂດຍ: CommWithUs “ສະໜັບສະໜູນ ການສື່ສານ ຂອງ ການຮ່ວມມື EU-ສປປ ລາວ ໃນດ້ານໂພຊະນາການ ແລະ ການສຶກສາ”

ຂຽນໂດຍ: Mayra Rivarola

ບັນນາທິການໂດຍ: Assunta Testa ແລະ Joanna Martin

ແຕ້ມໂດຍ: ແສງສຸລິ ກັດຕິຍະສັກ, ສະຫວັນໄຊ ຊູວັນເພັງ ແລະ ດອກຟ້າ ມາໄລທອງ

ບັນນາທິການຮູບແຕ້ມໂດຍ: ສຸນັນທາ ກັນລະຍາ ແລະ ສຸກພັນສາ ພູຜາສຸກ

ແປຈາກພາສາອັງກິດເປັນພາສາລາວໂດຍ: ພັດສະລິນ ພົມມະວົງ ແລະ ເພັດດາລາ ວົງຄຳສຸກ

ພາສາລາວກວດແກ້ໂດຍ: ອິນປອນ ແສນຄຳຕີ

ສະໜັບສະໜູນໂດຍ: ຫ້ອງການຜູ້ຕາງໜ້າສະຫະພາບເອີຣົບ ປະຈຳ ສປປ ລາວ

ຄູ່ຮ່ວມງານ: ກະຊວງສາທາລະນະສຸກ ລວມທັງສູນໂພຊະນາການ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງສຶກສາທິການ ແລະ ກິລາ, ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ສະຫະພັນແມ່ຍິງລາວ, GIZ, KfW, AFD, UNICEF, World Vision International, ກົມການຕ່າງປະເທດ ແລະ ການຄ້າອົດສະຕາລີ (DFAT), Agronomes et Vétérinaires Sans Frontières (AVSF), ສະມາຄົມພັດທະນາຊຸມຊົນສີຂຽວ (GCDA), Burnet Institute (BI), Save the Children International, ChildFund International, CARE International , Comité de Coopération avec le Laos (CCL).



© ຜູ້ຖືລິຂະສິດ: ສະຫະພາບເອີຣົບ

ທຸກສະບັບພິມເປັນພາສາລາວ ທີ່ໄດ້ຮັບທຶນຈາກໂຄງການນີ້ ມີຈຸດປະສົງ ເພື່ອແຈກຢາຍໃຫ້ຟຣີເທົ່ານັ້ນ.



ພິມທີ່ໂຮງພິມ: ລາວ ຢູນິພຣິນ

ພິມຈຳນວນ: 1000 ເຫຼັ້ມ

ປຶ້ມກາຕູນນີ້ ແມ່ນຖືກຜະລິດ ແລະ ອອກແບບໂດຍບໍລິສັດ Commwithus ແລະ ເປັນຜູ້ຮັບຜິດຊອບໂດຍກົງ ຕໍ່ເນື້ອຫາດັ່ງກ່າວ ໂດຍໄດ້ຮັບທຶນສະໜັບສະໜຸນ ຈາກສະຫະພາບ ເອີຣົບ


ສະຫະພາບ ເອີຣົບ
European Union

ສປປ ລາວ
Lao PDR

## ບົດສະເໜີເລື່ອງ:

ນາງ ດວງໃຈ, ເປັນນັກສຶກສາແພດ ທີ່ອາໄສຢູ່ໃນນະຄອນຫຼວງວຽງຈັນ. ມື້ໜຶ່ງເມື່ອເຫັນສະຖິຕິຂອງປະເທດ ກ່ຽວກັບພາວະການຂາດສານອາຫານ ລາວຮູ້ສຶກ ຄິດໜັກ ແລະ ກະວົນກະວາຍໃຈ:

ປະມານ 1 ສ່ວນ 3 ຂອງເດັກນ້ອຍ ທີ່ມີອາຍຸຕໍ່າກ່ວາ 5 ປີ ໃນປະເທດລາວ ແມ່ນຂາດສານອາຫານ.

ເດັກນ້ອຍທີ່ຂາດສານອາຫານ ທີ່ຍັງຄົງດໍາລົງຊີວິດຢູ່ໄດ້ ແມ່ນມີຄວາມສ່ຽງສູງ ທີ່ຈະເກີດບັນຫາດ້ານສຸຂະພາບ ຕະຫຼອດຊີວິດ. ພາວະການຂາດສານອາຫານ ແມ່ນສົ່ງຜົນກະທົບໃນ ທຸກໆດ້ານຂອງການດໍາລົງຊີວິດ ໂດຍເຮັດໃຫ້ເກີດຄວາມບົກພ່ອງດ້ານຄວາມສາມາດຂອງເດັກນ້ອຍ ໃນການເຕີບໃຫຍ່ຂະຫຍາຍຕົວ ຢ່າງເຕັມທີ່.

ນອກຈາກນີ້ ເດັກນ້ອຍຍັງຕ້ອງປະເຊີນກັບ ຜົນການຮຽນທີ່ຕໍ່າລົງ, ຊຶ່ງຈະສົ່ງຜົນກະທົບຕໍ່ຜົນຜະລິດ ແລະ ລາຍໄດ້ທີ່ໜ້ອຍລົງເມື່ອເຖິງໄວທີ່ເປັນຜູ້ໃຫຍ່.

ໃນທ້າຍທີ່ສຸດ, ໂພຊະນາການທີ່ບໍ່ພຽງພໍ ຂອງປະຊາກອນກໍ່ຈະເປັນອຸປະສັກ ຕໍ່ຄວາມກ້າວໜ້າຂອງປະເທດລາວ ແລະ ຖ່ວງດຶງຜູ້ຄົນຫຼາຍພັນຄົນໃຫ້ຕິດກັບດັກ ຢູ່ໃນວົງຈອນຂອງຄວາມທຸກຍາກ.

ນາງ ດວງໃຈ ຕັດສິນໃຈວ່າ ຈະຕ້ອງກະທໍາສິ່ງໃດໜຶ່ງຫຼາຍກ່ວານີ້ ແລະ ຄິດຄົ້ນຫາວິທີການທີ່ຈະຊ່ວຍເຫຼືອ, ລາວໄດ້ຍິນມາວ່າ ສະຫະພາບເອີຣົບ ໃນ ສປປ ລາວ ໄດ້ໃຫ້ການສະໜັບສະໜູນແຜນງານໂພຊະນາການ ດ້ານຕ່າງໆຢູ່ທົ່ວປະເທດ.

ດ້ວຍການເຮັດວຽກຮ່ວມກັບ ສະຫະພາບເອີຣົບ ລາວເລີ່ມດໍາເນີນການໃນການຜະຈົນໄພ ທີ່ພາລາວອອກຈາກເຂດພື້ນທີ່ໃນຕົວເມືອງ ແລະ ໄປຍັງເຂດຊົນນະບົດຂອງປະເທດລາວ ແລະ ລາວກໍໄດ້ຮຽນຮູ້ເຖິງບົດຮຽນທີ່ມີຄວາມສໍາຄັນຫຼາຍໆຢ່າງ.


ເມື່ອສອງສາມເດືອນກ່ອນ ໃນຂະນະ ທີ່ຂ້ອຍກຳລັງນັ່ງຮຽນໜັງສື ໃນຫ້ອງ, ຂ້ອຍພະຍາຍາມທີ່ຈະເຂົ້າໃຈວ່າ ເປັນຫຍັງການຂາດສານອາຫານ ໃນປະເທດລາວ ຍັງຄົງມີຢູ່ສູງ.
ເດັກນ້ອຍ 1 ໃນ 3 ໃນລາວ
ຂາດສານອາຫານ
ນີ້ເປັນເລື່ອງ ຍອມຮັບບໍ່ໄດ້! ຂ້ອຍຈະຕ້ອງ ເຮັດບາງຢ່າງ ຕໍ່ກັບ ບັນຫານີ້!
ຂ້ອຍ ຈະລອງ ພິຈາລະນາເບິ່ງວ່າ ຂ້ອຍຈະຊ່ວຍໄດ້ ດ້ວຍວິທີ ໃດດີ.


ມີບາງສິ່ງບາງຢ່າງ ດຶງດູດຄວາມສົນໃຈ ຂອງຂ້ອຍແທ້ໆ...
ມື້ເປີດ
# EU 4 Nutrition
ຍິນດີຕ້ອນຮັບ ສູ່ຫ້ອງການ ຄະນະຜູ້ແທນ EU!
ຂ້ອຍຊື່ ດວງໃຈ, ແລະ ຂ້ອຍມີຄວາມ ເປັນກັງວົນໃຈ ຕໍ່ກັບບັນຫາ
ການຂາດ ສານອາຫານ ໃນປະເທດລາວ.
ລາວ
ພວກເຮົາມີຫຼາຍໆ ວຽກງານ ທີ່ກຳລັງດຳເນີນການ ແກ້ໄຂບັນຫາ ການຂາດສານອາຫານ ໃນປະເທດລາວ ຈາກຫຼາກຫຼາຍ ມຸມມອງ.
ການຂາດສານອາຫານ ແມ່ນເກີດຈາກ ຫຼາຍສາເຫດ.


ປັດໄຈໜຶ່ງ ຂອງການຂາດ ສານອາຫານ ແມ່ນກ່ຽວຂ້ອງກັບຄວາມ ເປັນໄປໄດ້ຂອງຄອບຄົວ ໃນການເຂົ້າເຖິງ ອາຫານ ທີ່ມີຄຸນຄ່າທາງດ້ານ ໂພຊະນາການ.
ນອກຈາກນີ້ ຍັງກ່ຽວຂ້ອງ ກັບພຶດຕິກຳ ຂອງໂຕຜູ້ກ່ຽວເອງວ່າ ປົກກະຕິແລ້ວ ພວກເຂົາ ມັກກິນຫຍັງ.
ນ້ຳນົມແມ່ ເປັນອາຫານ ພຽງຢ່າງດຽວ ທີ່ເດັກນ້ອຍຈົນເຖິງ ອາຍຸ 6 ເດືອນຕ້ອງການ. ສະນັ້ນ ການລ້ຽງລູກດ້ວຍນ້ຳນົມແມ່ ພຽງຢ່າງດຽວ ຈຶ່ງມີຄວາມ ສຳຄັນຫຼາຍ...
...ແຕ່ວ່າ ບາງຄັ້ງແມ່ກໍ່ບໍ່ມີ ເວລາ ຫຼື ບໍ່ຮູ້ວິທີ ທີ່ດີທີ່ສຸດ ໃນການ ໃຫ້ນ້ຳນົມລູກ.
ໃນບາງໝູ່ບ້ານ ກໍບໍ່ມີແຫຼ່ງນ້ຳສະອາດທີ່ໃກ້ຄຽງ ເຮັດໃຫ້ແມ່ຍິງ ຈຳເປັນຕ້ອງໄດ້ ແບກຄຸໜັກໆ ແລະ ຍ່າງຫຼາຍ ກິໂລແມັດ, ເພື່ອໄປ ຕັກນ້ຳ.
ເຊິ່ງນ້ຳ ທີ່ຫາມາໄດ້ ສ່ວນ ໃຫຍ່ກໍເປັນນ້ຳ ທີ່ບໍ່ ສະອາດ, ເຮັດໃຫ້ ຜູ້ຄົນ - ໂດຍສະເພາະ ແມ່ນເດັກນ້ອຍ - ສາ ມາດເຈັບປ່ວຍໜັກ ຈາກການດື່ມນ້ຳ ທີ່ບໍ່ສະອາດ.


ກະຊວງ ສາທາລະນະສຸກ
ສະຫະພາບ ເອີຣົບ
ກະຊວງ ກະສິກຳ ແລະ ປ່າໄມ້
ກະຊວງ ການເງິນ
ການເຮັດວຽກຮ່ວມກັນ ຂອງຫຼາຍຂະແໜງການ ແລະ ປະຕິບັດໜ້າທີ່ຮັບຜິດຊອບ ຂອງຕົນເອງ ແມ່ນມີຄວາມຈຳເປັນ ເພື່ອແກ້ໄຂ ບັນຫາການຂາດ ໂພຊະນາການ.
ກະຊວງ ໂຍທາທິການ ແລະ ຂົນສົ່ງ


ຂ້ອຍຮູ້ສຶກ ສົງໃສ ແລະ ຕ້ອງການທີ່ຈະຮູ້ວ່າ ເປັນຫຍັງອັດຕາ ການໃຫ້ນົມລູກໃນ ປະເທດລາວ ຈຶ່ງຕໍ່າ.
ນາງ ດວງໃຈ ໄປທີ່ ໂຮງໝໍມະໂຫສົດ.
ຂ້ອຍຊື່ວ່າ ທ່ານໝໍ ລັດດາວອນ ຂ້ອຍເຮັດ ໜ້າທີ່ໃຫ້ການຊ່ວຍເຫຼືອແມ່ ແລະ ແອນ້ອຍທີ່ຫາກໍ່ເກີດໃໝ່.
ແມ່ຫຼາຍໆຄົນ ມັກຈະໄດ້ຮັບຂໍ້ມູນ ທີ່ສັບສົນຈາກ ຈາກຄອບຄົວ, ຄົນແຖວບ້ານ ແລະ ໃນໂຄສະນາ.
ໃນຖານະ ເປັນ ພະຍາບານ, ພວກເຮົາ ຕ້ອງການ ການສະໜັບສະໜູນ ເພື່ອໃຫ້ສາມາດ ເຂົ້າເຖິງບັນດາແມ່ ແລະ ສ້າງຄວາມສຳພັນທີ່ດີກັບ ພວກເຂົາ.
ພະຍາບານ ທັງໝົດ 16 ຄົນ ແລະ ຂ້ອຍ ໄດ້ສະໝັກ ເຂົ້າຮ່ວມ ຫຼັກສູດ ທີ່ອອກແບບ ໂດຍຜູ້ຊ່ຽວຊານຕ່າງປະເທດ ແລະ ພາຍໃນປະເທດ.


ສິ່ງທີ່ຂ້ອຍມັກ ກ່ຽວກັບຫຼັກສູດນີ້ ກໍຄື ມັນມີຂໍ້ມູນທີ່ທັນສະໄໝ ແຕ່ປັບໃຫ້ແທດເໝາະກັບສະພາບຄວາມເປັນຈິງ ໃນແຕ່ລະວັນຂອງພວກເຮົາດ້ວຍ.
ຕອນນີ້ ພວກເຮົາມີວິທີການໃນການສ້າງຄວາມສຳພັນທີ່ດີ ກັບບັນດາແມ່ ແລະ ສົ່ງເສີມໃຫ້ພວກເຂົາສືບຕໍ່ລ້ຽງລູກດ້ວຍນ້ຳນົມແມ່, ຢ່າງຖືກຕ້ອງ.
ຂ້ອຍຢ້ານວ່າ ລູກຂອງຂ້ອຍ ຈະກິນບໍ່ອີ່ມ... ຂ້ອຍຄວນເອົາຕື້ມເຂົ້າ ຫຼື ນົມຜົງໃຫ້ລູກກິນບໍ່?
ບໍ່ໄດ້ເດີ້! ເພາະວ່າໃນນ້ຳນົມແມ່ແມ່ນມີສານອາຫານທີ່ຈຳເປັນສຳລັບລູກນ້ອຍຢ່າງຄົບຖ້ວນແລ້ວ ເພື່ອໃຫ້ລູກ
ມີສຸຂະພາບທີ່ດີ ແລະ ແຂງແຮງ, ຈົນຮອດອາຍຸ 6 ເດືອນ.
ເຈົ້າເອງກໍຕ້ອງກິນໝາກໄມ້, ຜັກຕ່າງໆ ແລະ ດື່ມນ້ຳ ໃຫ້ໄດ້ຫຼາຍໆເດີ້...


ແລະເພື່ອໃຫ້ເຈົ້າ
ສາມາດຜະລິດນົມໃຫ້ລູກໄດ້ພຽງພໍ
ແມ່ຈະຕ້ອງໄດ້ພັກຜ່ອນ
ໃຫ້ພຽງພໍນໍາເດີ້.
ຖ້າຫາກວ່າ
ເຈົ້າຮູ້ສຶກບໍ່ສະບາຍ ກໍຕ້ອງ
ຢ່າລືມໄປຫາໝໍ!
6 ເດືອນຕໍ່ມາ
ຂ້ອຍຮູ້ສຶກດີໃຈ
ທີ່ໄດ້ເຫັນລູກຂອງຂ້ອຍເຕີບໃຫຍ່
ແຂງແຮງ ແລະ ມີສຸຂະພາບດີ!


ຂ້ອຍເຊື່ອວ່າ
ເມື່ອມີທ່ານໝໍ
ທີ່ໄດ້ຜ່ານການຝຶກອົບຮົມ
ເປັນຢ່າງດີ ໃນທົ່ວປະ
ເທດລາວ ແລ້ວອັດຕາ
ການລ້ຽງລູກດ້ວຍນົມແມ່
ພຽງຢ່າງດຽວ
ກໍຈະເພີ່ມຂຶ້ນ
ເຊັ່ນດຽວກັນ!


ທ່ານເອງກໍສາມາດປົກປ້ອງ, ໃຫ້ຄວາມຮູ້ ແລະ ສະໜັບສະໜູນ ການລ້ຽງລູກດ້ວຍນ້ຳນົມແມ່ໄດ້:
ພາກສ່ວນລັດຖະບານ:
ພໍ່:
ຄອບຄົວ:
ນາຍຈ້າງ:
ພາກສ່ວນສາທາລະນະສຸກ
ອົງການ EU ແລະ ພາກສ່ວນຮ່ວມງານ:


ການໃຫ້ນົມລູກ
ບາງຄັ້ງກໍບໍ່ແມ່ນເລື່ອງງ່າຍສຳລັບແມ່,
ມັນຈຶ່ງຈຳເປັນ ທີ່ພວກເຂົາ
ຈະຕ້ອງໄດ້ຮັບການສະໜັບສະໜູນ
ຫຼາຍທີ່ສຸດ!
INPATIENT LOBBY


ຂ້ອຍໄດ້ເຫັນວ່າ ແມ່ຫຼາຍຄົນເຮັດວຽກໜັກ ເພື່ອລູກໆຂອງພວກເຂົາ.
ນອກຈາກຈະຕ້ອງ ອອກໄປເຮັດວຽກແລ້ວ, ແມ່ນ ຍັງຕ້ອງເຮັດວຽກເຮືອນນຳ... ເຮັດໃຫ້ ພວກເຂົາບໍ່ມີເວລາທີ່ຈະພັກຜ່ອນ ຫຼື ໃຫ້ນົມລູກເລີຍ.
ຈະເຮັດແນວໃດດີນໍ ພວກເຮົາຈຶ່ງຈະສາມາດ ເຮັດໃຫ້ ສະມາຊິກໃນຄອບຄົວ ແບ່ງເບົາພາລະແມ່ ເພື່ອໃຫ້ແມ່ ໄດ້ມີເວລາເບິ່ງແຍງຕົວເອງ ຫຼາຍຂຶ້ນ? ລອງມາເບິ່ງນຳກັນເລີຍ!
ນາງ ດວງໃຈ ກຳລັງໄປຫ້ອງການສາທາລະນະສຸກ ເມືອງ ຫຼວງພະບາງ ຂອງອົງການ Save the children
ພວກເຮົາໄດ້ຈັດເຝິກອົບຮົມ ທີ່ມີແຕ່ແມ່ຍິງເທົ່ານັ້ນ ເຮັດໃຫ້ ຜູ້ທີ່ເປັນຜົວ ຢູ່ເຮືອນບໍ່ເຂົ້າໃຈວ່າ ຈະຕ້ອງປ່ຽນແປງ ຫຼື ແກ້ໄຂ ແນວໃດ.
Save the Children
ChildFund
care
ສະນັ້ນ ພວກເຮົາເລີຍ ຕັດສິນໃຈ ຈັດເປັນກຸ່ມເຝິກອົບຮົມ ນ້ອຍໆຂຶ້ນ ແລ້ວໃຫ້ຜູ້ຊາຍ ໄດ້ເຂົ້າຮ່ວມນຳ.
8:00-14:00
14:00-17:00
17:30-18:30
18:30-20:30


ອັນນີ້ ແມ່ນລາຍການ ຕາຕະລາງປະຈຳວັນ, ຂໍໃຫ້ບັນດາທ່ານ ຂຽນອອກມາວ່າ ທ່ານເຮັດຫຍັງແນ່ ໃນແຕ່ລະມື້.
8:00-14:00
14:00-17:00
17:30-18:30
18:30-20:30


ຂ້ອຍບໍ່ເຄີຍຮູ້ໂຕ ມາກ່ອນເລີຍວ່າ ເມຍຂອງຂ້ອຍ ເຮັດວຽກຫຼາຍປານນີ້... ຂ້ອຍກໍສາ ມາດຊັກເຄື່ອງ ແລະ ແຕ່ງກິນ ໄດ້ຄືກັນ!


ການເຝິກອົບຮົມນັ້ນ ໄດ້ຈັດຂຶ້ນຢູ່ໃນ 419 ບ້ານ ທາງພາກເໜືອຂອງລາວ
ຈີນ
ຫວຽດນາມ
ມຽນມາ


ໄດ້ມີລາຍງານ ຈາກບັນດາແມ່ ແລະ ຜູ້ຍິງວ່າ ພວກເຂົາມີເວລາໃນການດູແລ ຕົນເອງຫຼາຍຂຶ້ນແລ້ວ.


ໄດ້ເຫັນວ່າ ກໍລະນີ ເດັກນ້ອຍ ຂາດສານອາຫານ ຫຼຸດລົງຢ່າງຫຼວງຫຼາຍ ໃນໄລຍະຂອງໂຄງການ ອີກດ້ວຍ.


ທີ່ຈິງພວກເຂົາ ຍັງຄົງພົບຂໍ້ຫຍຸ້ງຍາກ ໃນການ ຊອກຫາອາຫານ ທີ່ມີສານ ອາຫານຄົບຖ້ວນຢູ່.
"ຫຼາຍກວ່າ 80% ຂອງ ຜູ້ທຸກຍາກຂອງປະເທດ ແມ່ນຢູ່ເຂດຊົນນະບົດ"
CHINA
ແຕ່ວ່າ ບັນດາ ຄອບຄົວໃນເຂດຊົນນະບົດ ພວກເຂົາກໍມີຕອນດິນ ຢູ່ແລ້ວ... ເປັນຫຍັງ ຄືບໍ່ປູກຜັກກິນເອງ?
ນາງ ດວງໃຈ ກຳລັງມຸ່ງໜ້າໄປທີ່ຫ້ອງການ World Vision International
ບັນດາຄອບຄົວເພິ່ນ ບໍ່ມີຄວາມຮູ້ ແລະ ຂາດເຂີນ ຫຼາຍປັດໃຈໃນການປູກພືດ ແລະ ໝາກໄມ້ຢູ່ບ້ານ.
ກ່ອນອື່ນໝົດ ພວກເຮົາໄດ້ເລືອກທັງໝົດ 124 ບ້ານທີ່ມີຄວາມທຸກຍາກ ຫຼາຍທີ່ສຸດ.
ສະຫວັນນະເຂດ
ສາລະວັນ
ອັດຕະປື
CAMBODIA


ຖ້າພວກເຮົາຢາກໃຫ້ ເດັກນ້ອຍເຕີບໃຫຍ່ມີສຸຂະພາບ ທີ່ແຂງແຮງ ເດັກນ້ອຍຈະຕ້ອງໄດ້ກິນ ຜັກ ແລະ ໝາກໄມ້ຫຼາຍໆ.
ພວກທ່ານສາມາດ ປູກຜັກຕ່າງໆໄດ້ເຊັ່ນ: ຜັກກາດ, ຫົວກາລົດ, ໝາກອຶ, ໝາກຖົ່ວຍາວ, ໝາກຖົ່ວຊຽວ ແລະ ປະເພດໝາກຖົ່ວອື່ນໆ ແລະ ຜັກອື່ນໆອີກ ທີ່ມີສານອາຫານ ທີ່ດີ.
ໃສ່ຝຸ່ນຊີວະພາບ ຈະຊ່ວຍໃຫ້ຜັກຂອງທ່ານ ເຕີບໃຫຍ່ໄວຂຶ້ນ.
ໃນຊ່ວງປີທຳອິດ ພວກເຮົາມີຄວາມຕັ້ງໃຈ ແລະສາ ມາດປູກຜັກ ໄດ້ຫຼາຍຈົນເຫຼືອກິນ ເຮັດໃຫ້ເຮົາສາມາດເອົາໄປຂາຍຕໍ່ ຢູ່ຕະຫຼາດໄດ້ນຳ.
ເມື່ອມີຫຼາຍຄົນ ນຳເອົາໄປເລົ່າ ປາກຕໍ່ປາກ
ໄດ້ເຮັດ ໃຫ້ມີ ຄອບຄົວ ເຂົ້າມາຮ່ວມໂຄງການ ເພີ່ມຫຼາຍກວ່າ 1,700 ຄອບຄົວ!
ມັນເປັນວິທີການແກ້ໄຂ ທີ່ງ່າຍດາຍ ແລະ ເໝາະສົມດີ ກັບບັນດາຄອບຄົວ ທີ່ກຳລັງ ປະເຊີນກັບບັນຫາດ້ານ ໂພຊະນາການເນາະ!


ຖ້າການເຂົ້າເຖິງ ນ້ຳສະອາດ ມີຄວາມ ສຳຄັນຫຼາຍ ຕໍ່ໂພ ຊະນາການ ທີ່ດີ...
ເປັນຫຍັງ ຄົນໃນຊົນນະບົດ ບ້ານເຮົາ ຈຶ່ງບໍ່ມີນ້ຳ ສະອາດໃຊ້?
ການສ້າງ ທີ່ສົ່ງນ້ຳປະປາ ໄປບ່ອນ ຫ່າງໄກສອກຫຼີກ ຕ້ອງໃຊ້ ຊັບພະຍາກອນມະຫາສານ ແລະ ຕ້ອງມີເຕັກນິກ ຂັ້ນສູງນຳ!
ດວງໃຈເດີນທາງມາຮອດໝູ່ບ້ານໜຶ່ງໃນແຂວງສະຫວັນນະເຂດ ແລະ ມຸ່ງໜ້າໄປວິສາຫະກິດນ້ຳປະປາແຂວງ.
ພວກເຮົາ ໄດ້ຮັບການຊ່ວຍເຫຼືອ ດ້ານຊັບພະຍາກອນ ແລະ ການຝຶກອົບຮົມ ດ້ານເຕັກນິກ.
ພວກເຮົາໄດ້ ວາງແຜນການກໍ່ສ້າງ ລະບົບທີ່ນ້ຳປະປາ ຂະໜາດນ້ອຍ ຢ່າງລະມັດ ລະວັງ.
ທີ່ນ້ຳປະປາດັ່ງກ່າວ ຖືກອອກແບບ ໃຫ້ມີຄວາມ ແຂງແຮງ ແລະ ໃຫ້ສາມາດ ລຳລຽງນ້ຳໄດ້ ຕະຫຼອດປີ.


ພະນັກງານຂອງພວກເຮົາ ກໍໄດ້ມີສ່ວນຮ່ວມໃນທຸກໆຂັ້ນຕອນ ແລະ ໄດ້ຮັບການຝຶກອົບຮົມ ເປັນທີ່ຮຽບຮ້ອຍແລ້ວ.
ພວກເຮົາໄດ້ ສ້າງອ່າງເກັບນ້ຳ ແລະ ບຳບັດນ້ຳສອງອັນ ແລະ ໄດ້ຕິດຕັ້ງ ທໍ່ນ້ຳທີ່ຍາວກວ່າ 400 ກິໂລແມັດ.
ນີ້ເປັນຄັ້ງທຳອິດເລີຍ ທີ່ພວກເຮົາສາມາດເຂົ້າເຖິງບ້ານ ໃນ ເຂດຊຸມຊົນຫ່າງໄກສອກຫຼີກ ໄດ້ທັງໝົດ 62 ບ້ານ ໃນແຂວງ ສະຫວັນນະເຂດ ແລະ ຄຳມ່ວນ!



ເພື່ອຫຼຸດຜ່ອນ ອັດຕາການຂາດສານອາຫານ, ມັນຈຳເປັນທີ່ຈະຕ້ອງຫຼີກລ່ຽງ ການດື່ມນ້ຳທີ່ບໍ່ ສະອາດ.
ປະຊາຊົນສ່ວນໃຫຍ່ ໃນໝູ່ບ້ານຂອງພວກເຮົາ ກຳລັງ ປະເຊີນກັບບັນຫາ ໃນການປະຕິບັດ ສຸຂະອະນາໄມທີ່ດີ. ນອກຈາກການເຂົ້າ ເຖິງນ້ຳສະອາດໃຫ້ໄດ້ແລ້ວ, ການປູກ ຈິດສຳນຶກ ກ່ຽວກັບສຸຂະອະນາໄມ ທີ່ດີ ກໍສຳຄັນເຊັ່ນ ດຽວກັນ.
ພວກເຮົາດີໃຈ ທີ່ໄດ້ເຫັນກຸ່ມນັກສະແດງລະຄອນ ສະແດງລະຄອນກ່ຽວກັບຄວາມ ສຳຄັນຂອງສຸຂະອະນາໄມ ແລະ ສຸຂາພິບານ.
ແຂວງ ສະຫວັນນະເຂດ
ແລະ ພະນັກງານ ໂຄງການ ກໍຊ່ວຍຈັດກິດ ຈະກຳໃຫ້ປະຊາຊົນ ມີສ່ວນ ຮ່ວມຢ່າງມ່ວນຊື່ນ.
ໄດ້ສ້າງຫ້ອງນ້ຳໃໝ່ 93 ແຫ່ງຢູ່ໃນ 13 ບ້ານໃນແຂວງສະຫວັນນະເຂດ.
ແລະມີຫຼາຍກວ່າ 3.200 ຄົນ ໄດ້ຮຽນຮູ້ ກ່ຽວກັບ ການປະຕິບັດສຸຂະອະນາໄມ ຜ່ານກິດຈະກຳທີ່ມ່ວນຊື່ນ.


ໃນໂຮງຮຽນຂອງຂ້ອຍ ພວກເຮົາໄດ້ສ້າງຕັ້ງ ແລະ ດຶງດູດ ນັກຮຽນເຂົ້າຮ່ວມກິດຈະກຳຕ່າງໆ ລວມທັງແບບເກມກິດຈະກຳ ອະນາໄມ.
ພວກເຮົາໄດ້ແຈກຢາຍ ຊຸດເຄື່ອງອະນາໄມ, ໄດ້ສ້າງ ຫ້ອງນ້ຳ ແລະ ຕິດຕັ້ງ ກ໋ອກນ້ຳ.
ອັດຕາການເຂົ້າ ໂຮງຮຽນແຕ່ກ່ອນ ແມ່ນສະເລ່ຍ 60% ເຊິ່ງຕອນນີ້ໄດ້ເພີ່ມຂຶ້ນ ເກືອບເຖິງ 100% ແລ້ວ.
ເປັນເຫດການ ທີ່ເກີດຂຶ້ນໃນ 11 ໂຮງຮຽນ ໃນແຂວງ ສະຫວັນນະເຂດ!
ກິດຈະກຳ ທີ່ມ່ວນຊື່ນ, ຊວນໃຫ້ ມີສ່ວນຮ່ວມ ແລະ ໃນ ເວລາດຽວກັນສອນຂໍ້ມູນ ທີ່ໜ້າສົນໃຈ ເປັນວິທີ ທີ່ສາມາດຊ່ວຍປ່ຽນ ແປງພຶດຕິກຳຂອງ ຄົນໄດ້ດີອີ່ຫຼີ.
ພວກເຮົາຫວັງວ່າສິ່ງນີ້ ຈະສາມາດສ້າງແຮງບັນດານໃຈ ໃຫ້ຄົນອື່ນ ເພື່ອໃຫ້ພວກເຮົາສືບຕໍ່ ເຮັດວຽກງານປັບປຸງສຸຂະອະນາໄມ ແລະການຫຼຸດຜ່ອນ ການເກີດພະຍາດ.


ວິທີປະຕິບັດດຽວ ຫຼື ນະໂຍບາຍພຽງຢ່າງດຽວ ແມ່ນບໍ່ສາມາດ ແກ້ໄຂບັນຫາການຂາດສານອາຫານນີ້ ໄດ້ແນ່ນອນ. ຕ້ອງໄດ້ຮັບການຮ່ວມມື ຈາກຫຼາກຫຼາຍ ສະຖາບັນ ແລະ ຂະແໜງການ.
ແຜນປະຕິບັດງານແຫ່ງຊາດ ດ້ານໂພຊະນາການ
2021-2025
ສະຖາບັນທັງໝົດນີ້ ເຮັດວຽກປະສານງານນຳກັນ ຈັ່ງໃດນໍ? ຂ້ອຍຈະຕ້ອງ ຫາຄຳຕອບ...
ໂດຍແມ່ນແລ້ວ! ພວກເຮົາກຳລັງເຮັດວຽກ ຮ່ວມກັບຫຼາຍໆອົງການ ຈັດຕ່າງໆໃນ ປະເທດລາວ.
1. ວາງແຜນ
2. ງົບປະມານ
3. ປະສານງານ
4. ຕິດຕາມ
5. ລາຍງານ
...ໃນການ ເຊື່ອມຕໍ່ ງົບປະມານ ໃຫ້ເຂົ້າ ກັບແຜນປະຕິບັດ ແລະ ຈັດຕັ້ງການ ຝຶກອົບຮົມ ວິຊາສະເພາະ.
ເພື່ອໃຫ້ ພວກເຂົາເຮັດວຽກ ຮ່ວມກັນໄດ້ດີຂຶ້ນ ແລະ ມີປະສິດທິພາບ ໃນການແກ້ໄຂບັນຫາ ການຂາດສານ ອາຫານນີ້!


ໂພຊະນາການທີ່ດີ ແມ່ນຈຳເປັນຕໍ່ຄວາມຍືນຍົງ ຂອງການພັດທະນາ ເສດຖະກິດ ສັງຄົມ ຂອງປະເທດຊາດ.
ແຕ່ກໍບໍ່ມີວິທີ ແກ້ໄຂແບບ ງ່າຍດາຍ... ທ່ານໄດ້ຮຽນຮູ້ຫຍັງ ຈາກການຄົ້ນຄວ້າຄັ້ງນີ້?
ສະຖາບັນ ແລະ ພາກສ່ວນຕ່າງໆ ຈະຕ້ອງເຮັດວຽກປະສານງານກັນ ເພື່ອເຮັດໜ້າທີ່ຂອງຕົນໃນວຽກງານປັບ ປຸງໂພຊະນາການດັ່ງ ກ່າວນີ້.
ເພື່ອສ້າງລະບົບນ້ຳ ແລະ ໃຫ້ຄວາມຮູ້ແກ່ປະຊາຊົນ ກ່ຽວກັບການປະຕິບັດ ຫຼັກອະນາໄມ.
ເພື່ອຮັບປະກັນວ່າ ຊຸມຊົນສາມາດມີລາຍຮັບເພີ່ມຂຶ້ນ ແລະ ສາມາດຜະລິດອາຫານ ທີ່ມີຄຸນຄ່າໂພຊະນາການ ໄດ້ຫຼາກຫຼາຍ.
ເພື່ອສົ່ງເສີມ ສະໜັບ ສະໜູນແມ່ ແລະ ຄອບຄົວ ແລະ ປັບປຸງວິທີການໃຫ້ນ້ຳ ນົມລູກຢ່າງຖືກຕ້ອງ.


ໂພຊະນາການ
ທີ່ດີ ແມ່ນພື້ນຖານ
ຂອງຊີວິດທີ່ດີ
ແລະ ສຸຂະພາບ
ທີ່ແຂງແຮງ!
AHAN
ເມື່ອເຮັດວຽກຮ່ວມກັນ, ພວກເຮົາສາມາດ
ເຕີບໃຫຍ່ເຂັ້ມແຂງໄປພ້ອມກັນ
ແລະ ພວກເຮົາ
ກໍມີຄວາມພາກພູມໃຈ
ທີ່ໄດ້ເຮັດວຽກກັບບັນດາ
ຄູ່ຮ່ວມງານກັນໃນລາວ
ໃນການຮັບປະກັນວ່າ
ທຸກຄົນຈະໄດ້ຮັບ
ໂພຊະນາການທີ່ດີນຳກັນ
ຢ່າງຕໍ່ເນື່ອງຕ້ອນໜ້າ.

ສະບາຍດີ! ຂ້າພະເຈົ້າຂໍອະນຸຍາດແນະນຳໂຕແດ່ຈັກໜ້ອຍ. ພວກເຮົາຄື ສະຫະພາບເອີຣົບ - ຫຼືເອີ້ນຫຍໍ້ວ່າ "ອີຢູ" ແມ່ນກຸ່ມປະເທດຮ່ວມກັນທາງດ້ານເສດຖະກິດ ແລະ ການເມືອງຂອງທັງໝົດ 27 ປະເທດໃນທະວີບເອີຣົບ. ພວກເຮົາເຮັດວຽກຮ່ວມກັນ ເພື່ອສົ່ງເສີມການເຄົາລົບກຽດສັກສີຂອງມະນຸດ, ເສລີພາບ, ປະຊາທິປະໄຕ, ຄວາມສະເໝີພາບ, ການປົກຄອງຂອງກົດໝາຍ ແລະ ເຄົາລົບສິດທິມະນຸດ. ພວກເຮົາມີຄະນະຜູ້ແທນທັງໝົດ 140 ຄົນໃນທົ່ວໂລກ ເພື່ອສະໜັບສະໜູນ ການພັດທະນາແບບຍືນຍົງດັ່ງກ່າວ, ແລະ ເພື່ອບໍ່ໃຫ້ໃຜຖືກປະຖິ້ມໄວ້ທາງຫຼັງ.

ຢູ່ປະເທດ ລາວ, ພາລະກິດຂອງສຳນັກງານຜູ້ຕາງໜ້າເອີຣົບ ແມ່ນເພື່ອຮັດແໜ້ນສາຍພົວພັນກັບລັດຖະບານ ສປປ ລາວ ແລະ ປະຊາຊົນຂອງລາວ. ເປົ້າໝາຍຂອງພວກເຮົາແມ່ນເພື່ອສ້າງການເຕີບໂຕແບບຄອບຄຸມ ແລະ ວຽກເຮັດງານທຳ ເພື່ອຍົກລະດັບຊີວິດການເປັນຢູ່. ພວກເຮົາມີສ່ວນຮ່ວມໃນການຮ່ວມມືທີ່ແທ້ຈິງ ທີ່ທຸກຄົນໄດ້ຮັບຜົນປະໂຫຍດເຊັ່ນດຽວກັນ.

ໃນຖານະທີມເອີຣົບ ພວກເຮົາໃຫ້ຄຳໝັ້ນສັນຍາ ທີ່ຈະປະກອບສ່ວນປະມານ 550 ລ້ານເອີໂຣໃນການສະໜັບສະໜູນ:

- ເສດຖະກິດສີຂຽວ
- ການພັດທະນາຊັບພະຍາກອນມະນຸດ
- ການປົກຄອງທີ່ດີ

ປະຕິບັດຕາມແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ຄັ້ງທີ 9 ແລະ ກອບການຟື້ນຕົວຂອງພະຍາດໂຄວິດ-19.



ລັດຖະບານ ສປປ ລາວ:

ຄູ່ຮ່ວມງານຂອງ ສະຫະພາບເອີຣົບໃນ ສປປ ລາວ: